# ກອງປະຊຸມປຶກສາຫາລືລະດັບສູງ
# ຕໍ່ຮ່າງຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນ ສະບັບທີ III ໄລຍະປີ 2026 2035.

----------------------

ກົມຮ່ວມມື ແລະ ການເງິນສາກົນ, ກະຊວງການເງິນ ຮ່ວມກັບ ອົງການສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ ໄດ້ຈັດກອງປະຊຸມຜ່ານຮ່າງຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ ສະບັບທີ III (VD III) ໂດຍການເຂົ້າຮ່ວມເປັນປະທານຂອງ ທ່ານ ສຸລິວັດ ສຸວັນນະຈຸມຄຳ, ຮອງລັດຖະມົນຕີ ກະຊວງການເງິນ ແລະ ທ່ານ ບາໂຄເດຍ ເບີຄານອຟ ຜູ້ປະສານງານ ອົງການສະຫະປະຊາຊາດ ປະຈຳ ສປປ ລາວ (UNRC), ມີຜູ້ຕາງໜ້າ ຈາກບັນດາຄູ່ຮ່ວມພັດທະນາ ເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້ ແມ່ນເພື່ອເປັນການປຶກສາຫາລື ແລະ ລະດົມແນວຄວາມຄິດໃສ່ການປັບປຸງຮ່າງຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ ສະບັບທີ III ໄລຍະປີ 2026-2035, ເຊິ່ງໄດ້ຖອດຖອນບົດຮຽນ ຈາກການຈັດຕັ້ງປະຕິບັດຖະແຫຼງການວຽງຈັນ ສະບັບທີ I ກ່ຽວກັບ ປະສິດທິພາບຂອງການຊ່ວຍເຫຼືອ ໄລຍະປີ 2006-2015, ຖະແຫຼງການວຽງຈັນ ສະບັບທີ II ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີມີປະສິດທິຜົນ ໄລຍະ 2016-2025 ແລະ ບັນດາສິ່ງທ້າທາຍທີ່ມີຄວາມຊັບຊ້ອນເຊັ່ນ ຄວາມຫຍຸ້ງຍາກດ້ານເສດຖະກິດ ແລະ ການເງິນ ທີ່ປະເທດຊາດຂອງພວກເຮົາກຳລັງປະເຊີນຢູ່. ສຳລັບຖະແຫຼງການວຽງຈັນສະບັບທີ III ຈະສຸມໃສ່ 6 ຫຼັກການເຊັ່ນ: ຄວາມເປັນເຈົ້າການ ແລະ ຄວາມເປັນຜູ້ນຳພາ; ການເປັນຄູ່ຮ່ວມພັດທະນາທີ່ມີຄຸນນະພາບດີຂຶ້ນ; ການຈັດຕັ້ງປະຕິບັດທີ່ອີງໃສ່ຜົນໄດ້ຮັບເປັນຫຼັກ; ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ; ການຄາດຄະເນ ແລະ ຄວາມກົມກຽວກັນ ແລະ ການສົ່ງເສີມຄວາມອາດສາມາດ.

ນອກຈາກນີ້, ກອງປະຊຸມ ຍັງໄດ້ປຶກສາຫາລືລົງເລິກ 8 ປະເດັນຫຼັກໆຄື: 1 ຄາດໝາຍສູ້ຊົນໃນການປະຕິຮູບແຜນການຮ່ວມມື, 2 ເນັ້ນໃສ່ການພັດທະນາຊັບພະຍາກອນມະນຸດ, 3 ເປົ້າໝາຍໃນການແກ້ໄຂຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ, 4 ການມີສ່ວນຮ່ວມຂອງບັນດາອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ, 5 ການເພີ່ມທະວີຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ, 6 ການລະດົມທຶນດ້ານຊັບພະຍາກອນເປັນເສົາຄ້ຳຫຼັກ, 7 ການປັບປຸງກົງຈັກການຈັດຕັ້ງຂອງໜ່ວຍງານຂະແໜງການ (SWGs) ແລະ 8 ຄວາມສອດຄ່ອງກັບເປົ້າໝາຍການພັດທະນາລະດັບຊາດ.

ກອງປະຊຸມ ໄດ້ສັງລວມເອົາບັນດາຄຳຄິດເຫັນ ແລະ ທິດທາງການຮ່ວມມືໃນໄລຍະຕໍ່ໜ້າຈາກບັນດາຄູ່ຮ່ວມພັດທະນາ ຊຶ່ງເປັນຂໍ້ມູນສຳຄັນສຳລັບການກະກຽມຮ່າງຖະແຫຼງການວຽງຈັນສະບັບໃໝ່ (2026-2036) the Draft Vientiane Declaration on Partnership for Effective Development Cooperation Phase III , VDCAP III ໂດຍຈະເປັນເອກະສານອີກໜຶ່ງສະບັບ ທີ່ຈະເຊັນລົງນາມຮັບຮອງເອົາຢູ່ກອງປະຊຸມໂຕະມົນລະດັບສູງ ທີ່ ຈະຈັດຂຶ້ນໃນວັນທີ 19 ພະຈິກ 2025 ທີ່ຈະມາເຖິງນີ້.